# ເຈົ້າມີສິດທີຈະໄດ້ຮັບ
# ການດູແລ ແລະ ການປົກປ້ອງ!

ຄູ່ມືສຳລັບທາງເລືອກໃນການລ້ຽງດູເດັກທີ່ນຳໃຊ້ພາສາທີ່ ແທດເໝາະກັບເດັກນ້ອຍ ແລະ ຊາວໜຸ່ມ



SOS CHILDREN'S VILLAGES

## ສາລະບານ


1 ສິດທິຂອງເຈົ້າຕໍ່ການດູແລ ແລະ ການປົກປ້ອງ 3

2 ຈະເກີດຫັຍງຂຶ້ນຖ້າເຈົ້າ ແລະ ພໍ່ແມ່ຕ້ອງປະເຊີນກັບຄວາມຫຍຸ້ງຍາກ 8

3 ຈະເກີດຫັຍງຂຶ້ນຖ້າເຈົ້າບໍ່ສາມາດອາໃສຢູ່ກັບພໍ່ແມ່ຂອງເຈົ້າ 11

4 ຈະເກີດຫັຍງຂຶ້ນຖ້າເຈົ້າຢູ່ຄົນດຽວໃນຕ່າງປະເທດ 26

5 ຈະເກີດຫັຍງຂຶ້ນຖ້າມີເຫດສຸກເສີນໃນປະເທດຂອງເຈົ້າ 29


## ຕຳນານທີມາ



ເດັກນ້ອຍ ແລະ ຊາວໜຸ່ມ



ພໍ່ແມ່



ຜູ້ໃຫ້ການດູແລ



ພະນັກງານລັດ

ບົດຮຽນທີ 1

# ສິດທິຂອງເຈົ້າຕໍ່ການດູແລ ແລະ ການປົກປ້ອງ



## ການດູແລ ແລະ ການປົກປ້ອງແມ່ນຫັຍງ?

ເຖິງວ່າເຈົ້າຈະອາຍຸເຖິງໄວເປັນຜູ້ໃຫ່ຍຄື 18ປີ, ໃນຫຼາຍໆປະເທດຍັງຖືວ່າເຈົ້າ ແມ່ນເດັກນ້ອຍຕາມກົດໝາຍ, ແລະ ຍ້ອນກົດໝາຍກຳນົດ ເຈົ້າຈຶ່ງມີສິດທິເຊັ່ນ: ສິດທິໄດ້ຮັບການດູແລ ແລະ ການປົກປ້ອງ.

ໝາຍຄວາມວ່າລັດຖະບານ ແລະ ຜູ້ໃຫ່ຍຈະຕ້ອງເຮັດທຸກວິທີທາງເພື່ອດູແລ ແລະ ປົກປ້ອງເຈົ້າໃຫ້ເຕີບໃຫ່ຍກາຍເປັນຄົນທີ່ເຂັ້ມແຂງ ແລະມີສຸຂະພາບແຂງແຮງຕາມ ໄວຂອງເຈົ້າ.

ນີ້ແມ່ນສິດທິຂອງເຈົ້າເຊິ່ງໝາຍຄວາມວ່າເຈົ້າບໍ່ຈຳເປັນຕ້ອງຮຽກຮ້ອງຂໍ. ເຈົ້າມີສິດ ທີນີ້ຍ້ອນວ່າກົດໝາຍໄດ້ກຳນົດໄວ້ ແລະ ທຸກໆຄົນຕ້ອງເຄົາລົບຕໍ່ກົດໝາຍ.



## ແມ່ນໃຜເປັນຜູ້ຮັບຜິດຊອບຕໍ່ການດູແລ ແລະ ການປົກປ້ອງຂອງຂ້ອຍ?

ຄວນຕ້ອງມີຜູ້ໃຫ່ຍຢ່າງໜ້ອຍຄົນໜຶ່ງເປັນຜູ້ຮັບຜິດຊອບຕໍ່ການດູແລ ແລະ ການປົກປ້ອງເຈົ້າ ຕອນເຈົ້າຍັງເປັນເດັກນ້ອຍເຊັ່ນ: ມີຄົນໃດຄົນໜຶ່ງທີ່ເຈົ້າສາມາດໄວ້ໃຈ, ມີຜູ້ທີ່ໃຫ້ການສົ່ງເສີມ ແລະ ແນະນໍາໃນສິ່ງທີ່ຈໍາເປັນຕໍ່ເຈົ້າຈົນກ່ວາເຈົ້າຈະເປັນຜູ້ໃຫ່ຍ.

ພໍ່ແມ່ ໂດຍທົ່ວໄປແລ້ວແມ່ນຈະເປັນຜູ້ຮັບຜິດຊອບໃນການດູແລ ແລະ ປົກປ້ອງ. ແຕ່ບາງຄັ້ງ, ພໍ່ແມ່ກໍ່ບໍ່ສາມາດທີ່ຈະໃຫ້ການສົ່ງເສີມ ແລະ ດູແລເຈົ້າ ຕົວຢ່າງເຊັ່ນ, ຍ້ອນຜູ້ໃດຜູ້ໜຶ່ງຫຼືພໍ່ແມ່ທັງສອງມີບັນຫາຮ້າຍແຮງ ແລະ ບໍ່ສາມາດດູແລລູກຂອງພວກເຂົາໄດ້ດີ, ຫຼື ຍ້ອນພໍ່ແມ່ຕາຍ. ໃນກໍລະນີດັ່ງກ່ວາ, ອາດຈະມີຜູ້ໃຫ່ຍຄົນອື່ນໃນຄອບຄົວຜູ້ທີ່ສາມາດຮັບຜິດຊອບແທນພໍ່ແມ່.

ອາດຈະເປັນອ້າຍ ຫຼື ເອື້ອຍກົກ, ປ້າ ຫຼື ລຸງ, ພໍ່ເຖົ້າແມ່ເຖົ້າຂອງເດັກ ຫຼື ອາດຈະເປັນຍາດຕິພີ່ນ້ອງຊັ້ນຈໍາ ແລະ ໝູ່ເພື່ອນຄົນອື່ນໆ. ຖ້າບໍ່ມີຜູ້ໃດໃນຄອບຄົວຂອງເຈົ້າບໍ່ສາມາດດູແລເຈົ້າ, ຈະມີຜູ້ໃຫ່ຍຄົນອື່ນໆຜູ້ທີ່ສາມາດດູແລເຈົ້າໄດ້ – ຕົວຢ່າງເຊັ່ນ: ຄົນຜູ້ທີ່ມີປະສົບການໃນການດູແລເດັກນ້ອຍ ແລະ ຜູ້ທີ່ຕ້ອງການຊ່ວຍເຫຼືອເຈົ້າຈົນກ່ວາວ່າເຈົ້າຈະສາມາດດູແລຕົວເອງ ແລະ ດໍາລົງຊີວິດດ້ວຍຕົວຂອງເຈົ້າເອງ.

# ຈະເກີດຫຍັງຂຶ້ນຖ້າຂ້ອຍບໍ່ໄດ້ຮັບການດູແລ ແລະ ການປົກປ້ອງ?

ຖ້າພໍ່ແມ່ບໍ່ສາມາດຮັບປະກັນໄດ້ວ່າຈະສາມາດດູແລ ແລະ ປົກປ້ອງລູກຂອງພວກເຂົາ, ບໍ່ວ່າຈະເປັນໄລຍະເວລາຊົ່ວຄາວ ຫຼື ຍາວນານ, ລັດຖະບານຈະຕ້ອງຊອກຫາວິທີເພື່ອຊ່ວຍເຫຼືອເດັກນ້ອຍເລົ່ານີ້ເພື່ອໃຫ້ພວກເຂົາມີຜູ້ໃຫ່ຍດູແລຢ່າງໜ້ອຍຄົນໜຶ່ງເຊິ່ງຮູບການຊ່ວຍເຫຼືອແບບນີ້ເອີ້ນວ່າ: 'ທາງເລືອກໃນການລ້ຽງດູເດັກນ້ອຍ'.

ມີເອກະສານທີ່ເອີ້ນວ່າ: 'ຄູ່ມືສໍາລັບທາງເລືອກໃນການລ້ຽງດູເດັກ' ເຊິ່ງໄດ້ອະທິບາຍລາຍລະອຽດຈະເຮັດແນວໃດເພື່ອຊ່ວຍເຫຼືອເດັກນ້ອຍຜູ້ທີ່ບໍ່ສາມາດອາໃສຢູ່ກັບພໍ່ແມ່ຂອງພວກເຂົາ. ເອກະສານຍັງໄດ້ອະທິບາຍເຖິງວິທີການຈະຊ່ວຍພໍ່ແມ່ຂອງເດັກໃນການແກ້ໄຂບັນຫາເພື່ອຈະຊ່ວຍໃຫ້ພວກເຂົາສາມາດດູແລລູກຂອງພວກເຂົາ.

'ຄູ່ມືສໍາລັບທາງເລືອກໃນການລ້ຽງດູເດັກ' ຈະຊ່ວຍໃຫ້ເດັກນ້ອຍທຸກຄົນໄດ້ຮັບການດູແລ ແລະ ການປົກປ້ອງບໍ່ວ່າພວກເຂົາຈະແມ່ນໃຜ, ອາໃສຢູ່ໃສ, ມາຈາກໃສ, ເວົ້າພາສາຫັຍງ, ສາສະໜາຫັຍງ, ມີຄວາມສາມາດເຮັດຫັຍງ, ຫຼື ເປັນເພດໃດ.



ບົດຮຽນທີ 2

# ຈະເກີດຫັຍງຂຶ້ນຖ້າເຈົ້າ ແລະ ພໍ່ແມ່ຂອງເຈົ້າຕ້ອງປະເຊີນກັບ ຄວາມຫຍຸ້ງຍາກ



# ພໍ່ແມ່ຂອງຂ້ອຍສາມາດຮັບການຊ່ວຍເຫຼືອເພື່ອດູແລຂ້ອຍບໍ?

ພໍ່ແມ່ບາງຄັ້ງຄາວກໍ່ມີບັນຫາຮ້າຍແຮງທີ່ເຮັດໃຫ້ເກີດຄວາມຫຍຸ້ງຍາກໃນການດູແລລູກຂອງພວກເຂົາ. ຕົວຢ່າງເຊັ່ນ, ມີພໍ່ແມ່ທີ່ເຈັບປ່ວຍຮ້າຍແຮງ ຫຼື ຜູ້ທີ່ມີບັນຫາຕິດເຫຼົ້າ ຫຼື ຕິດຢາເສບຕິດ ຫຼື ທຸກຍາກ ແລະ ບໍ່ມີຜູ້ໃດຊ່ວຍເຫຼືອພວກເຂົາ.

ໃນກໍລະນີເປັນແບບນີ້, ເຈົ້າ ແລະ ພໍ່ແມ່ຂອງເຈົ້າຄວນໄດ້ຮັບການຊ່ວຍເຫຼືອຈາກລັດຖະບານ ແລະ ຊຸມຊົນບ່ອນທີ່ເຂົາເຈົ້າອາໃສຢູ່ເພື່ອແກ້ໄຂຕໍ່ບັນຫາ ແລະ ດໍາລົງຊີວິດຢູ່ນໍາກັນດ້ວຍຄວາມອົບອຸ່ນ. ຕົວຢ່າງຂອງການຊ່ວຍເຫຼືອດັ່ງກ່າວເຊັ່ນ: ການໃຫ້ຄໍາປຶກສາຄອບຄົວ, ການຝຶກອົບຮົມ ແລະ ການຮັກສາສຸຂະພາບເປັນພິເສດ.



# ຈະເກີດຫັຍງຂຶ້ນຖ້າການຢູ່ກັບພໍ່ແມ່ບໍ່ດີຂຶ້ນເລີຍສຳລັບຂ້ອຍ?

ເຈົ້າຄວນຈະໄດ້ຮັບການລ້ຽງດູ ແລະ ເຕີບໃຫ່ຍໃນສະພາບແວດລ້ອມຂອງຄອບຄົວບ່ອນທີ່ເຈົ້າຮູ້ສຶກປອດໄພ, ໄດ້ຮັບຄວາມຮັກ ແລະ ການສົ່ງເສີມ. ຖ້າມັນບໍ່ແມ່ນເຫດຜົນທີ່ດີ, ລັດຖະບານຄວນໃຫ້ການຊ່ວຍເຫຼືອແກ່ພໍ່ແມ່ຂອງເຈົ້າເພື່ອເຮັດໃຫ້ພວກເຂົາສາມາດດູແລ ແລະ ປົກປ້ອງເຈົ້າເປັນຢ່າງດີ.

ຖ້າມັນຍັງບໍ່ຊ່ວຍໃຫ້ດີຂຶ້ນ, ເພື່ອຜົນປະໂຫຍດສູງສຸດຂອງເຈົ້າ ແລະ ມັນມີຄວາມຈຳເປັນຫຼາຍຕໍ່ເຈົ້າທີ່ຕ້ອງມີໃຜຄົນໜຶ່ງມາດູແລເຈົ້າແທ່ນພໍ່ແມ່ ແລະ ປົກປ້ອງເຈົ້າຈາກສະພາບແວດລ້ອມທີ່ອາດຈະມີຜົນກະທົບທີ່ບໍ່ດີຕໍ່ເຈົ້າ.

ລັດຖະບານ ຫຼື ຜູ້ທີ່ສາມາດຕັດສິນເທົ່ານັ້ນທີ່ສາມາດຕັດສິນໃຈໄດ້ພາຍຫຼັງຮັບຟັງຕໍ່ຄຳຄິດເຫັນຂອງເຈົ້າ ແລະ ຄຳຄິດເຫັນຈາກພໍ່ແມ່ຂອງເຈົ້າ ແລະ ຈາກສາມາຊິກຄົນອື່ນໆໃນຄອບຄົວ ແລະ ໝູ່ເພື່ອນ.



ບົດຮຽນທີ 3

# ຈະເກີດຫັຍງຂຶ້ນຖ້າເຈົ້າບໍ່ສາມາດອາໃສຢູ່ກັບພໍ່ແມ່ຂອງເຈົ້າ



## ຂ້ອຍຖືກແຍກຈາກພໍ່ແມ່ຂອງຂ້ອຍ. ຂ້ອຍຈະໄປຢູ່ໃສ?

ລັດຖະບານຄວນໃຫ້ການຊ່ວຍເຫຼືອເຈົ້າດ້ວຍທາງເລືອກໃນການລ້ຽງດູເດັກ, ຖ້າເຈົ້າບໍ່ສາມາດອາໃສຢູ່ກັບພໍ່ແມ່ຂອງເຈົ້າເຊັ່ນ: ສະຖານທີພັກໃໝ່ບ່ອນທີ່ເຈົ້າສາມາດອາໃສຢູ່ກັບບຸກຄົນທີ່ໄວໃຈໄດ້ຜູ້ທີ່ສາມາດໃຫ້ການດູແລ ແລະ ປົກປ້ອງເຈົ້າໄດ້.

ຈະມີທາງເລືອກທີຫຼາກຫຼາຍສໍາລັບໃຫ້ເຈົ້າວ່າສະຖານທີໃດທີ່ເໝາະກັບເຈົ້າເພື່ອຈະເລືອກບ່ອນທີ່ດີສຸດສໍາລັບກໍລະນີຂອງເຈົ້າແຕ່ບົນພື້ນຖານການຮັບຟັງ ແລະ ການຕັດສິນໃຈຂອງເຈົ້າເປັນອັນສໍາຄັນ.

ເຊັ່ນຕົວຢ່າງ: ເຈົ້າສາມາດອາໃສຢູ່ກັບຍາດພີ່ນ້ອງ ຫຼື ເພື່ອນສະໜິດ ຫຼື ອາໃສຢູ່ກັບຄອບຄົວຄົນອື່ນໃນຊຸມຊົນຂອງເຈົ້າເຊິ່ງເປັນຜູ້ທີ່ເຕັມໃຈທີ່ຈະດູແລເຈົ້າ ຫຼື ຢູ່ໃນສະຖານທີ່ມີຜູ້ໃຫ່ຍທີ່ມີປະສົບການໃນການລ້ຽງດູເດັກນ້ອຍເພື່ອດູແລເຈົ້າ ແລະ ເດັກນ້ອຍຄົນອື່ນໆທີ່ຕົກຢູ່ໃນສະພາບແບບດຽວກັບເຈົ້າ.

ທຸກໆສະຖານທີທີ່ເຈົ້າອາໃສຢູ່, ລັດຖະບານຕ້ອງໄດ້ຮັບປະກັນວ່າເຈົ້າຈະໄດ້ຮັບການດູແລ ແລະ ການປົກປ້ອງທີ່ຈໍາເປັນສໍາລັບເຈົ້າ ໃຫ້ຫຼາຍເທົ່າທີ່ເຈົ້າຕ້ອງການ.

## ຊີວິດຂອງຂ້ອຍຈະເປັນແນວໃດຢູ່ສະຖານທີ່ໃໝ່?

ສະຖານທີ່ແຫ່ງໃໝ່ຄວນຕ້ອງໄດ້ຕອບສະໜອງຕໍ່ຄວາມຈໍາເປັນທີ່ເປັນລັກສະນະສະເພາະຂອງເຈົ້າ ແລະ ມີຄວາມຄາຍຄຽງກັບສະຖານທີ່ເຈົ້າເຄີຍອາໃສຢູ່ເທົ່າທີ່ຈະເປັນໄປໄດ້ເພື່ອວ່າເຈົ້າຈະສາມາດດໍາລົງຊີວິດຂອງເຈົ້າຕໍ່ໄປກັບການປ່ຽນແປງ

ບາງຢ່າງເທົ່າທີ່ຈະເປັນໄປໄດ້ ແລະ ເຈົ້າຍັງສາມາດຕິດຕໍ່ພົວພັນກັບຄອບຄົວຂອງເຈົ້າ ແລະ ໝູ່ເພື່ອນໄດ້ຖ້າມັນດີສໍາລັບເຈົ້າ.

ຢູ່ສະຖານທີ່ແຫ່ງໃໝ່, ເຈົ້າຈະມີຄວາມປອດໄພ, ມີອາຫານພຽງພໍ, ເຮືອນຊານ ແລະ ສິ່ງອື່ນໆທີ່ຈໍາເປັນຕໍ່ການດໍາລົງຊີວິດຂອງເຈົ້າ.

ຄົນທີ່ດູແລເຈົ້າໃນສະຖານທີ່ແຫ່ງໃໝ່ຈະຕ້ອງໄດ້ນໍາພາ ແລະ ສົ່ງເສີມເຈົ້າເມື່ອໃດກໍ່ຕາມທີ່ເຈົ້າຕ້ອງການເຊັ່ນ: ໃຫ້ການເບິ່ງແຍງທາງດ້ານສຸຂະພາບ ແລະ ຈິດໃຈ, ຊ່ວຍເຫຼືອໃນການຮໍ່າຮຽນ ຫຼື ການຮຽນຮູ້ກ່ຽວກັບຊີວິດໃນການເຮັດວຽກ ແລະສົ່ງເສີມການມີສ່ວນຮ່ວມຂອງເຈົ້າກັບຊຸມຊົນທີ່ເຈົ້າອາໃສຢູ່.



# ຂ້ອຍຈະໄດ້ຮັບສິດຄືກັນກັບເດັກນ້ອຍຄົນອື່ນໆບໍ ຖ້າຂ້ອຍບໍ່ໄດ້ອາໃສ່ກັບພໍ່ແມ່ຂອງຂ້ອຍ?

ແມ່ນແລ້ວເຈົ້າຈະໄດ້ຮັບສິດທິຄືເກົ່າ, ເດັກທຸກໆຄົນໃນໂລກໃບນີ້ຈະໄດ້ຮັບສິດທິພາຍໃຕ້ກົດໝາຍ ແລະ ມັນເອີ້ນວ່າ 'ສິດທິຂອງເດັກ'.

ເຊັ່ນຕົວຢ່າງຂອງສິດທິທີ່ເດັກຈະໄດ້ຮັບ: ມີອາຫານທີ່ປອດໄພ, ນ້ຳດື່ມ, ເຮືອນຊານ, ການສຶກສາ, ການຮັກສາສຸຂະພາບ, ການປົກປ້ອງຈາກຄວາມຮຸນແຮງ, ມີເວລາຫວ່າງ ແລະ ການຫຼິ້ນກິດຈະກຳຕ່າງໆກັບໝູ່ເພື່ອນ, ການສະແດງຄວາມຄິດເຫັນ, ການຮັບຟັງ, ການນັບຖືທາງສາສະໜາ, ຮີດຄອງປະເພນີ ແລະ ພາສາ.

ບໍ່ມີໃຜຈະປະຕິເສດຕໍ່ສິດທິເລົ່ານີ້ເພາະວ່າເຈົ້າບໍ່ໄດ້ດຳລົງຊີວິດຢູ່ກັບພໍ່ແມ່ຂອງເຈົ້າ. ເຊິ່ງສິດທິຂອງເດັກນ້ອຍທັງໝົດເລົ່ານີ້ແມ່ນໄດ້ລະບຸຢູ່ໃນເອກະສານທີ່ເອີ້ນວ່າ: 'ສົນທິສັນຍາວ່າດ້ວຍສິດທິຂອງເດັກ'. ເຈົ້າສາມາດຖາມຜູ້ໃຫຍ່ທີ່ເຈົ້າໄວ້ໃຈຕໍ່ກັບຂໍ້ມູນກ່ຽວກັບສິດທິເດັກໄດ້ເຊັ່ນ: ບຸກຄົນທີ່ດູແລເຈົ້າ, ຍາດພີ່ນ້ອງ ຫຼື ຄູອາຈານ.



## ຂ້ອຍສາມາດມີສ່ວນຮ່ວມໃນການຕັດສິນໃຈຕໍ່ຊີວິດຂອງຂ້ອຍບໍ?

ເຈົ້າມີສິດທິໃນການຮັບຮູ້ ແລະ ໃນການສະແດງຄວາມຄິດເຫັນຂອງເຈົ້າໃນທຸກໆບັນຫາທີ່ກ່ຽວກັບຊີວິດຂອງເຈົ້າ,ຂໍ້ຄິດເຫັນຂອງເຈົ້າຈະໄດ້ຮັບການພິຈາລະນາ ແລະ ຮັບຮູ້ຢ່າງຈິງຈັງ.ຕົວຢ່າງເຊັ່ນ: ເຈົ້າຄວນຕ້ອງໄດ້ມີສ່ວນຮ່ວມໃນການຕັດສິນໃຈຕໍ່ກັບໂຮງຮຽນທີ່ເຈົ້າຈະໄປຮຽນ, ຕໍ່ກັບການຮັກສາສຸຂະພາບ, ບໍ່ວ່າຈະເປັນບັນຫາກ່ຽວກັບວ່າເຈົ້າຈະສາມາດດຳລົງຊີວິດຢູ່ກັບຄອບຄົວຂອງເຈົ້າເອງ ຫຼື ເຈົ້າຄິດວ່າມັນບໍ່ດີສຳລັບເຈົ້າ, ບໍ່ວ່າຈະເປັນບັນຫາກ່ຽວກັບສະຖານທີ່ເຈົ້າຈະອາໃສຢູ່ປະຈຸບັນ ແລະ ແຜນການສຳລັບອະນາຄົດຂອງເຈົ້າ.

ເຈົ້າກໍ່ຍັງສາມາດສະແດງຄຳຄິດເຫັນກ່ຽວກັບການດູແລຕໍ່ເຈົ້າໃນສະຖານທີ່ທີ່ເຈົ້າອາໃສຢູ່ເປັນແນວໃດ ແລະ ຈະໃຫ້ມີການປັບປຸງແນວໃດສຳລັບເຈົ້າ ແລະ ເດັກນ້ອຍຄົນອື່ນໆທີ່ຢູ່ໃນສະພາບແບບດຽວກັບເຈົ້າ.



## ຄວາມຄິດເຫັນ ແລະ ຄວາມຕ້ອງການຂອງຂ້ອຍ ຈະໄດ້ຮັບການພິຈາລະນາບໍ?

ຄວາມຄິດເຫັນ ແລະ ຄວາມຕ້ອງການຂອງເຈົ້າຈະຖືເປັນບັນຫາສຳຄັນໃນການຕັດສິນໃຈຕ່າງໆທີ່ກ່ຽວກັບຊີວິດຂອງເຈົ້າ. ຍ້ອນເຫດນີ້ເຈົ້າຈຶ່ງຄວນມີແຜນການລ້ຽງດູສະເພາະເຊິ່ງແຜນເລົ່ານີ້ໄດ້ລະບຸລະອຽດຕໍ່ຄວາມຕ້ອງການຂອງເຈົ້າແລະມີວິທີການແນວໃດເພື່ອຈະເຮັດໃຫ້ໄດ້ຕາມຄວາມຕ້ອງການຂອງເຈົ້າ, ແຕ່ກໍ່ຕ້ອງອີງໃສ່ຄວາມຄິດເຫັນ ແລະ ຄວາມປາດຖະໜາຂອງເຈົ້າມີທັງແຕ່ທີ່ຢາກເຮັດຕໍ່ຊີວິດຂອງເຈົ້າໃນອະນາຄົດ. ຄົນທີ່ດູແລເຈົ້າຕ້ອງໃຫ້ການສົ່ງເສີມການມີສ່ວນຮ່ວມຂອງເຈົ້າໃນການຂຽນແຜນດັ່ງກ່າວ ແລະ ມີການກວດກາຕິດຕາມເປັນແຕ່ລະໄລຍະຕໍ່ການຈັດຕັ້ງປະຕິບັດແຜນ, ມີຜົນດີແນວໃດສຳລັບເຈົ້າເພື່ອລາຍງານ (ການຕິດຕາມຕ້ອງເຮັດທຸກໆ 3 ເດືອນ).



## ຂ້ອຍຄວນຄາດຫວັງຫຍັງຈາກ
## ບຸກຄົນທີ່ດູແລຂ້ອຍ?

ບຸກຄົນທີ່ດູແລເຈົ້າແມ່ນຄົນທີ່ໄວ້ໃຈໄດ້ທີ່ລັດຖະບານໄດ້ມອບໜ້າທີ່ໃຫ້ຮັບຜິດຊອບເພື່ອດູແລ ແລະ ປົກປ້ອງເຈົ້າເມື່ອເວລາທີ່ເຈົ້າບໍ່ສາມາດດຳລົງຊີວິດຢູ່ກັບພໍ່ແມ່ຂອງເຈົ້າ. ບຸກຄົນດັ່ງກ່າວນີ້ເອີ້ນວ່າ: 'ຜູ້ລ້ຽງດູ'.

ຜູ້ລ້ຽງດູຄວນໃຫ້ການເບິ່ງແຍງ ລ້ຽງດູເຈົ້າເຊັ່ນ: ມີອາຫານທີ່ພຽງພໍ, ເຮືອນຊານ, ສົ່ງເສີມການສຶກສາຂອງເຈົ້າ ແລະ ການຮັກສາສຸຂະພາບ, ແນະນຳໃຫ້ເຈົ້າໄດ້ມີການພົວພັນຕິດຕໍ່ກັບຄອບຄົວ, ໝູ່ເພື່ອນຂອງເຈົ້າ ແລະ ປົກປ້ອງເຈົ້າຈາກຄວາມຮຸນແຮງທຸກໆປະເພດ ຫຼື ສິ່ງທີ່ບໍ່ດີທີ່ອາດຈະເກີດຂຶ້ນກັບເຈົ້າ.

ຄວນມີການສົ່ງເສີມການພົວພັນທີ່ດີກັບຜູ້ລ້ຽງດູຢ່າງກ້ວາງຂວາງເພື່ອວ່າ ເຈົ້າຈະສາມາດຖາມ, ຂໍຄຳແນະນຳ ແລະ ແລກປ່ຽນບັນຫາຕ່າງໆທີ່ເຈົ້າບໍ່ຢາກໃຫ້ຄົນອື່ນຮູ້ຈັກ ແລະ ຄວນໃຫ້ການເຄົາລົບຕໍ່ຄວາມຕ້ອງການຂອງເຈົ້າທີ່ກ່ຽວພັນເຖິງຄວາມຮູ້ສຶກຂອງເຈົ້າເຊັ່ນ: ຄວາມສະເໝີພາບທາງເພດ, ຄວາມເຊື່ອຖືທາງສາສະໜາ, ຊີວິດຈິດໃຈ ແລະ ປະຫັວດຂອງເຈົ້າ.





## ຂ້ອຍສາມາດພັກຢູ່ກັບເອື້ອຍ-ອ້າຍນ້ອງຂອງຂ້ອຍບໍ?

ເມື່ອເອື້ອຍ-ອ້າຍນ້ອງຂອງເຈົ້າໄດ້ຮັບການດູແລຈາກພາຍນອກທີ່ບໍ່ແມ່ນຄອບຄົວຂອງເຈົ້າ, ເຈົ້າຈະໄດ້ພັກຢູ່ນຳກັນ. ລັດຖະບານ ແລະ ພາກສ່ວນຊ່ວຍເຫຼືອສັງຄົມຄວນຈະເຮັດທຸກໆຢ່າງທີ່ສາມາດເຮັດໄດ້ເພື່ອຫຼີກລ້ຽງບໍ່ໃຫ້ເອື້ອຍ-ອ້າຍນ້ອງຂອງເຈົ້າຖືກແຍກກັນ, ເວັ້ນແຕ່ຖ້າການພັກຢູ່ນຳກັນບໍ່ມີຜົນດີຕໍ່ເຈົ້າ.

## ຂ້ອຍສາມາດຕິດຕໍ່ກັບຄອບຄົວຂອງຂ້ອຍບໍ?

ເຈົ້າຄວນຕ້ອງໄດ້ຮັບການສົ່ງເສີມໃຫ້ຕິດຕໍ່ພົວພັນກັບຄອບຄົວຂອງເຈົ້າ, ເມື່ອໃດກໍ່ຕາມທີ່ເປັນໄປໄດ້ ແລະ ມັນບໍ່ເປັນອັນຕະລາຍຕໍ່ເຈົ້າ. ການຕິດຕໍ່ກັບຄອບຄົວຈະຊ່ວຍເຈົ້າ ແລະ ຄອບຄົວພັດທະນາສາຍສຳພັນຂອງເຈົ້າ ແລະ ບາງທີອາດຈະສາມາດເຮັດໃຫ້ເຈົ້າ ແລະ ຄອບຄົວກັບມາຢູ່ນຳກັນໄດ້ອີກຄັ້ງໃນມື້ໃດມື້ໜຶ່ງ.

ເຈົ້າຄວນໄດ້ມີສ່ວນຮ່ວມໃນການຕັດສິນໃຈຕໍ່ກັບການຈະຕິດຕໍ່ກັບຄອບຄົວຂອງເຈົ້າແນວໃດ. ຖ້າເຈົ້າບໍ່ສາມາດຕິດຕໍ່ໂດຍກົງກັບບຸກຄົນໃນຄອບຄົວຂອງເຈົ້າ, ເຈົ້າຄວນໄດ້ຮັບຂໍ້ມູນຂ່າວສານຕໍ່ກັບພວກເຂົາຈາກຜູ້ໃຫ່ຍທີ່ດູແລເຈົ້າ.

## ຂ້ອຍຈະໄດ້ຮັບການຊ່ວຍເຫຼືອຈົນເຖິງມື້ໃດ?

ເຈົ້າຄວນໄດ້ມີບຸກຄົນໃດໜຶ່ງດູແລເຈົ້າດົນເທົ່າທີ່ເຈົ້າຕ້ອງການ—ຈົນກ່ວາວ່າເຈົ້າຈະສາມາດກັບຄືນໄປພັກຢູ່ກັບພໍ່ແມ່ຂອງເຈົ້າໄດ້ອີກ, ຫຼື ຈົນກ່ວາເຈົ້າຈະມີຄວາມພ້ອມ ແລະ ເປັນຜູ້ໃຫ່ຍທີ່ຈະດຳລົງຊີວິດດ້ວຍຕົນເອງຢ່າງເປັນເອກະລາດ.

ລັດຖະບານ ຫຼື ຜູ້ທີ່ສາມາດຕັດສິນຄວນໄດ້ປະເມີນສະຖານະພາບຂອງເຈົ້າເປັນແຕ່ລະໄລຍະ ແລະ ຕັດສິນໃຈຖ້າເຫັນວ່າການດູແລມີຜົນດີຕໍ່ເຈົ້າຫຼືມັນມີຄວາມຈຳເປັນທີ່ຕ້ອງໄດ້ປ່ຽນແປງ. ພວກເຂົາກໍ່ຕ້ອງຖາມຄຳຄິດເຫັນຈາກເຈົ້າຕໍ່ກັບບັນຫານີ້ ແລະ ຕ້ອງໄດ້ປະຕິບັດຕາມທີ່ໄດ້ຕົກລົງກັນ.

## ຂ້ອຍສາມາດກັບໄປຢູ່ກັບພໍ່ແມ່ຂອງຂ້ອຍໄດ້ອີກບໍ?

ເຈົ້າຄວນຈະສາມາດກັບຄືນໄປຢູ່ກັບຄອບຄົວຂອງເຈົ້າໄດ້ໄວເທົ່າທີ່ພໍ່ແມ່ຂອງເຈົ້າ ຫຼື ຄົນອື່ນໆໃນຄອບຄົວທີ່ສາມາດດູແລເຈົ້າໄດ້. ເພາະເຫດນີ້ລັດຖະບານ ແລະ ຜູ້ທີ່ສາມາດຕັດສິນຄວນປະເມີນສະຖານະພາບຂອງເຈົ້າ ແລະ ສະຖານະພາບຂອງພໍ່ແມ່ຂອງເຈົ້າເປັນປົກະຕິ ແລະ ຕ້ອງໄດ້ຖາມຄວາມຄິດເຫັນຂອງເຈົ້າເພື່ອຈະເປັນບ່ອນອີງໃນການຕັດສິນໃຈວ່າເຈົ້າສາມາດກັບໄປຢູ່ກັບຄອບຄົວໄດ້ອີກຄັ້ງ.

ຖ້າເຫັນວ່າເຈົ້າ ແລະ ພໍ່ແມ່ມີຄວາມພ້ອມທີ່ຈະຢູ່ນໍາກັນໄດ້ອີກຄັ້ງກໍ່ຕ້ອງໄດ້ມີແຜນການລະອຽດກ່ຽວກັບເວລາໃດ ແລະ ເຈົ້າຈະສາມາດກັບຄືນແນວໃດ. ເຈົ້າຈະໄດ້ຮັບຮູ້ກ່ຽວກັບແຜນການ ແລະ ມີສ່ວນຮ່ວມໃນທຸກໆການຕັດສິນໃຈຕໍ່ກັບແຜນການ.

ເມື່ອເຈົ້າໄດ້ກັບມາຢູ່ກັບພໍ່ແມ່ຂອງເຈົ້າອີກຄັ້ງ, ເຈົ້າ ແລະ ພໍ່ແມ່ຄວນຈະໄດ້ຮັບການຊ່ວຍເຫຼືອເພື່ອຮັບປະກັນວ່າເຈົ້າຈະສາມາດຢູ່ຮ່ວມກັນໄດ້ເປັນຢ່າງດີ.



## ຈະເກີດຫັຍງຂຶ້ນຖ້າຄົນອື່ນປະຕິບັດຕໍ່ຂ້ອຍຢ່າງບໍ່ເໝາະສົມຫຼື ເຮັດໃຫ້ຂ້ອຍບາດເຈັບ?



ເຈົ້າມີສິດທິຈະອາໃສຢູ່ໃນສະພາວແວດລ້ອມທີ່ປອດໄພ.ບໍ່ມີໃຜທີ່ຄວນຈະປະຕິບັດກັບເຈົ້າຢ່າງບໍ່ເໝາະສົມຫຼືເຮັດໃຫ້ເຈົ້າບາດເຈັບ,ບໍ່ວ່າຈະທາງຮ່າງກາຍດ້ວຍການຈັບສຳພັດເຈົ້າທີ່ບໍ່ເໝາະສົມຫຼືດ້ວຍການໃຊ້ຄຳເວົ້າທີ່ເຮັດໃຫ້ເຈົ້າເຈັບໃຈ. ຖ້າມີບັນຫານີ້ເກີດຂຶ້ນເຈົ້າຄວນບອກຜູ້ໃຫ່ຍທີ່ເຈົ້າໄວໃຈເຊັ່ນ:ບຸກຄົນທີ່ດູແລເຈົ້າ, ພີ່ນ້ອງ ຫຼື ຄູອາຈານເພື່ອຂໍໃຫ້ເພິ່ນຊ່ວຍ.

ໃນທຸກໆປະເທດຈະມີຫຼາຍວິທີທີ່ເຈົ້າສາມາດເຮັດເພື່ອຂໍຄວາມຊ່ວຍເຫຼືອຖ້າມີບຸກຄົນປະຕິບັດຕໍ່ເຈົ້າແບບບໍ່ຖືກຕ້ອງຫຼືເຮັດໃຫ້ເຈົ້າບາດເຈັບ ສິ່ງສຳຄັນຄື: ໂທຫາໜ່ວຍງານຊ່ວຍເຫຼືອເດັກໃນປະເທດຂອງເຈົ້າ; ໂທຫາຕຳຫຼວດຫຼືໄປຫາຫ້ອງການຕຳຫຼວດທີ່ໄກ້ທີ່ສຸດ; ຕິດຕໍ່ເຈົ້າໜ້າທີ່ທີ່ຊ່ວຍເດັກນ້ອຍພາຍໃນປະເທດ (ເຊິ່ງເປັນໜ່ວຍງານທີ່ຮັບຜິດຊອບໃນການປົກປ້ອງແລະສົ່ງເສີມສິດທິຂອງເດັກແລະຊາວໜຸ່ມ).ຖ້າມີອົງການຈັດຕັ້ງທີ່ໃຫ້ການຊ່ວຍເຫຼືອເຈົ້າ, ຄອບຄົວຂອງເຈົ້າ ຫຼື ຊຸມຊົນຂອງເຈົ້າ, ເຈົ້າສາມາດຖາມພະນັກງານທີ່ເຈົ້າໄວໃຈເພື່ອຂໍຄວາມຊ່ວຍເຫຼືອ (ປົກະຕິແລ້ວບຸກຄົນດັ່ງກ່າວແມ່ນ ‘ພະນັກງານປົກປ້ອງຄວາມປອດໄພເດັກ’ ຫຼື ‘ພະນັກງານປົກປ້ອງເດັກ’).

## ຂ້ອຍຂໍມີຄວາມເປັນສ່ວນຕົວຂອງຂ້ອຍໄດ້ບໍ?

ຄວາມເປັນສ່ວນຕົວຂອງເຈົ້າແມ່ນເມື່ອເຈົ້າອະນຸຍາດໃຫ້ບຸກຄົນໃດໜຶ່ງສາມາດສໍາພັດຕົວຂອງເຈົ້າ, ສະຖານ, ວັດຖຸສິ່ງຂອງ ແລະ ຂໍ້ມູນຕ່າງໆທີ່ເຈົ້າໄດ້ຮັກສາ. ເຈົ້າຄວນໄດ້ຮັບຄວາມເປັນສ່ວນຕົວຂອງເຈົ້າເວລາທີ່ເຈົ້າພັກຢູ່ກັບຄອບຄົວ ແລະ ຕອນທີ່ເຈົ້າບໍ່ໄດ້ຢູ່ກັບຄອບຄົວ.

ຖ້າເຈົ້າບໍ່ໄດ້ພັກຢູ່ກັບຄອບຄົວກໍ່ຕາມເຈົ້າກໍ່ຄວນໄດ້ມີສະຖານທີ່ເປັນສ່ວນຕົວທີ່ເຈົ້າສາມາດນໍາໃຊ້,ເມື່ອເຈົ້າຕ້ອງການຢາກຢູ່ຄົນດຽວລວມເຖິງພື້ນທີສໍາລັບການດູແລ ແລະ ການຮັກສາຄວາມສະອາດຮ່າງກາຍທີ່ເປັນສ່ວນຕົວຂອງເຈົ້າ ແລະ ເຈົ້າກໍ່ຄວນມີພື້ນທີທີ່ເຈົ້າສາມາດເກັບຮັກສາວັດຖຸສິ່ງຂອງທີ່ສໍາຄັນຂອງເຈົ້າເຊັ່ນວ່າ: ຕູ້ເກັບຮັກສາວັດຖຸທີ່ເປັນຂອງສ່ວນຕົວ.



## ຂ້ອຍຈະໄດ້ຮັບອະນຸຍາດໃຫ້ຮູ້ປະຫັວດຂອງຂ້ອຍບໍ?

ປະຫັວດຂອງເຈົ້າແມ່ນສ່ວນໜຶ່ງຂອງຕົວຕົນຂອງເຈົ້າ ເຊິ່ງມັນຈະບອກເຖິງວ່າເຈົ້າແມ່ນໃຜ ແລະ ເຈົ້າມີຮູບຮ່າງລັກສະນະທີ່ແຕກຕ່າງຈາກຄົນອື່ນແນວໃດ. ເຈົ້າຄວນໄດ້ມີເອກະສານຢັ້ງຢືນເຖິງຊື່, ນາມສະກຸນ, ວັນເດືອນປີເກີດ ແລະ ຂໍ້ມູນພື້ນຖານອື່ນໆທີ່ສຳຄັນຕໍ່ເຈົ້າເພື່ອວ່າເຈົ້າຈະສາມາດຂໍການຊ່ວຍເຫຼືອທີ່ຈຳເປັນສຳລັບເຈົ້າ. ເຈົ້າຄວນໄດ້ຮັບຮູ້ຕໍ່ປະຫັວດຂອງເຈົ້າ, ຄອບຄົວຂອງເຈົ້າ, ສະຖານະພາບໃນປະຈຸບັນ ແລະ ແຜນການຕໍ່ອະນາຄົດຂອງເຈົ້າ.

ຜູ້ລ້ຽງດູເຈົ້າສາມາດຊ່ວຍເຈົ້າ ປົກປ້ອງ ແລະ ພັດທະນາຊີວິດຂອງເຈົ້າ ຄືວ່າງເຊັ່ນ: ການເຫັນດີຮ່ວມກັນໃນການເກັບຮັກສາ 'ເອກະສານປະຫັວດຂອງເຈົ້າ' ຮູບພາບ ແລະ ພາບຄວາມຊົງຈຳອື່ນໆເພື່ອບັນທຶກເຫດການຕ່າງໆຂອງເຈົ້າໄວ້.

## ຂ້ອຍຮັບຮູ້ວ່າມື້ໃດມື້ໜຶ່ງຂ້ອຍສາມາດໄປດຳລົງຊີວິດດ້ວຍຕົວຂອງຂ້ອຍເອງ. ມັນຈະມີວິທີແນວໃດ?

ເມື່ອເຈົ້າເຖິງໄວເປັນຜູ້ໃຫ່ຍຄືມີອາຍຸໄດ້18ປີ, ໂດຍທົ່ວໄປແລ້ວໃນຫຼາຍໆປະເທດເຈົ້າຈະບໍ່ແມ່ນເດັກນ້ອຍແລ້ວຖ້າອີງຕາມກົດໝາຍ ແລະ ເຈົ້າສາມາດອອກໄປຢູ່ດ້ວຍຕົວຂອງເຈົ້າເອງໄດ້ຖ້າເຈົ້າມີຄວາມພ້ອມ.

ເພື່ອຢາກໃຫ້ມີຄວາມພ້ອມ,ເຈົ້າຕ້ອງໄດ້ມີການກະກຽມທີ່ຖືກຕ້ອງເພື່ອຈະອອກໄປຢູ່ເປັນເອກະລາດແລະສາມາດປະເຊີນກັບຄວາມຮັບຜິດຊອບຕ່າງໆຂອງໄວໜຸ່ມ

ບຸກຄົນທີ່ດູແລເຈົ້າຄວນຊ່ວຍເຈົ້າໃນການກຽມຕົວເອງເມື່ອເວລາເຈົ້າທີ່ອາໃສຢູ່ຂາງນອກ. ເຈົ້າຄວນຕ້ອງສ້າງແຜນເພື່ອພັດທະນາຄວາມຮູ້ ແລະ ທັກສະທີ່ຈຳເປັນຕອນອາໃສຢູ່ກັບຜູ້ດູແລເພື່ອເຈົ້າຈະກາຍເປັນຜູ້ໃຫ່ຍທີ່ເຈົ້າຢາກເປັນ ແລະ ມີສ່ວນຮ່ວມກັບສັງຄົມເມື່ອເຈົ້າເປັນຜູ້ໃຫ່ຍຂຶ້ນ. ເຈົ້າຄວນມີແຜນພັດທະນານີ້ກ່ອນເຈົ້າຈະອາຍຸເຖິງໄວເປັນຜູ້ໃຫ່ຍ,ເຊິ່ງໃນຂັ້ນຕອນການກະກຽມແຜນແມ່ນຈະອີງຕາມອາຍຸຂອງເຈົ້າ, ຄວາມສາມາດ ແລະ ຄວາມຕ້ອງການ.

ແຜນພັດທະນາຄວນຮັບປະກັນວ່າເຈົ້າໄດ້ຮັບການສຶກສາ ແລະ ການຝຶກອົບຮົມທີ່ຈຳເປັນເພື່ອທີ່ຈະມີຄວາມພ້ອມໃນການສະໝັກວຽກ. ເຈົ້າສາມາດເຂົ້າເຖິງການຮັກສາສຸຂະພາບ ແລະ ການບໍລິການອື່ນໆ, ເຈົ້າຈະໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນທີ່ພຽງພໍເພື່ອລິເລີ້ມການດຳລົງຊີວິດດ້ວຍຕົວຂອງເຈົ້າເອງ. ຖ້າເຈົ້າພິການເຈົ້າຄວນຈະໄດ້ຮັບການສົ່ງເສີມທີ່ຈຳເປັນເພື່ອຊ່ວຍໃຫ້ເຈົ້າເປັນເອກະລາດເທົ່າທີ່ຈະເປັນໄປໄດ້ ແລະ ປະກອບສ່ວນຮ່ວມກັບຊຸມຊົນຄືກັບຊາວໜຸ່ມຄົນອື່ນໆ.



ບົດຮຽນທີ 4

# ຈະເກີດຫັຍງຂຶ້ນຖ້າເຈົ້າຢູ່ຄົນດຽວໃນຕ່າງປະເທດ



## ຂ້ອຍຢູ່ຄົນດຽວໃນຕ່າງປະເທດທີ່ໄກບ້ານເກີດຂອງຂ້ອຍ. ໃຜຈະດູແລຂ້ອຍ?

ຖ້າເຈົ້າຢູ່ໃນປະເທດທີ່ບໍ່ແມ່ນປະເທດບ່ອນເຈົ້າດຳລົງຊີວິດຢູ່ ແລະ ບໍ່ມີພໍ່ແມ່ ຫຼື ຄົນໃນຄອບຄົວດູແລເຈົ້າ,ລັດຖະບານຂອງປະເທດນັ້ນຕ້ອງຮັບປະກັນວ່າເຈົ້າຈະມີຜູ້ລ້ຽງດູໃຫ້ການດູແລເຈົ້າ.ເຈົ້າຕ້ອງໄດ້ຮັບການປົກປ້ອງແລະສົ່ງເສີມຄືກັນກັບເດັກນ້ອຍຄົນອື່ນໆຢູ່ໃນປະເທດນັ້ນ ແລະ ພວກເຂົາຕ້ອງເຄົາລົບຕໍ່ຄຳຄິດເຫັນຂອງເຈົ້າ, ວັດທະນາທຳ, ສາສະໜາ, ພາສາ ແລະ ປະຫັວດ ແລະ ເຊື້ອຊາດ.



## ຂ້ອຍສາມາດຕິດຕໍ່ກັບຄອບຄົວຂອງຂ້ອຍໄດ້ບໍ?

ບຸກຄົນທີ່ດູແລເຈົ້າ ແລະ ລັດຖະບານຕ້ອງຊ່ວຍເຈົ້າໃນການຕິດຕໍ່ກັບພໍ່ແມ່ ຫຼື ຄົນໃນຄອບຄົວທີ່ອາໃສຢູ່ໃນປະເທດຂອງເຈົ້າ ແລະ ຕິດຕາມເບິ່ງຖ້າມັນມີຄວາມເປັນໄປໄດ້ ແລະ ດີສໍາລັບເຈົ້າທີ່ຈະກັບໄປຢູ່ກັບພວກເຂົາ.

## ຂ້ອຍສາມາດຮັບການປົກປ້ອງຈາກສາກົນ?

ຖ້າເຈົ້າຈໍາຕ້ອງອອກຈາກປະເທດຂອງເຈົ້າຍ້ອນຄວາມຢ້ານກົວຊີວິດຈະເປັນອັນຕະລາຍເຊັ່ນ: ສົງຄາມຫຼືການໃຊ້ຄວາມຮຸນແຮງ. ເຈົ້າສາມາດຂໍການປົກປ້ອງຈາກສາກົນ (ຫຼືເອີ້ນອີກຢ່າງໜຶ່ງວ່າ'ການລີ້ໄພ'). ເຈົ້າຈໍາເປັນຕ້ອງໄດ້ນໍາເອກະສານຕ່າງໆມາສະແດງ ແລະ ມັນຕ້ອງໃຊ້ເວລາດົນແນ່ເພື່ອຈະຮັບການປົກປ້ອງຈາກສາກົນ.

ບຸກຄົນທີ່ດູແລເຈົ້າແລະລັດຖະບານຄວນຕ້ອງໄດ້ຊ່ວຍເຈົ້າຕໍ່ບັນຫານີ້.ເຈົ້າບໍ່ຄວນກັບຄືນໄປປະເທດຂອງເຈົ້າຖ້າມີຄວາມສ່ຽງຕໍ່ຊີວິດຂອງເຈົ້າ ແລະ ຄວາມປອດໄພ ຫຼື ຖ້າບໍ່ມີຜູ້ໃຫ່ຍຢູ່ບ່ອນນັ້ນທີ່ຈະດູແລເຈົ້າ.

## ຂ້ອຍຈະຖືກກັກຕົວບໍ?

ເຈົ້າຈະບໍ່ຖືກກັກຕົວເພາະພຽງເຫດຜົນເຈົ້າອົບພະຍົກມາຈາກປະເທດອື່ນ, ຖ້າເຈົ້າບໍ່ໄດ້ເຮັດຜິດຄະດີອາຍາ ແລະ ເຈົ້າກໍ່ບໍ່ຄວນຖືກກັກຕົວຖ້າຜູ້ໃຫ່ຍບັງຄັບໃຫ້ເຈົ້າເຮັດບາງສິ່ງບາງຢ່າງທີ່ຜິດຕໍ່ກົດໝາຍ.

ບົດຮຽນທີ 5

# ຈະເກີດຫັຍງຂຶ້ນຖ້າມີເຫດສຸກເສີນໃນປະເທດຂອງເຈົ້າ



## ເຫດການສຸກເສີນແມ່ນຫັຍງ?

ເຫດການສຸກເສີນໃນປະເທດຂອງເຈົ້າຄື: ສົງຄາມ, ນ້ຳຖ້ວມ, ແຜ່ນດິນໄຫວ ຫຼື ໄພພິບັດ.

## ຈະເກີດຫັຍງຂຶ້ນຖ້າຄອບຄົວຂອງຂ້ອຍຕ້ອງການຄວາມຊ່ວຍເຫຼືອເພື່ອດູແລຂ້ອຍໃນໄລຍະມີເຫດການສຸກເສີນ?

ຖ້າມີເຫດການສຸກເສີນຢູ່ໃນປະເທດຂອງເຈົ້າ, ເຈົ້າແລະຄອບຄົວຂອງເຈົ້າຄວນໄດ້ຮັບການຊ່ວຍເຫຼືອເຊັ່ນ:ອາຫານ ແລະ ການຊ່ວຍເຫຼືອທາງການແພດ, ແລະການຊ່ວຍເຫຼືອໃຫ້ເຂົ້າເຖິງການບໍລິການພື້ນຖານສຳລັບຊີວິດຂອງເຈົ້າເຊັ່ນ:ເຂົ້າໂຮງຮຽນ ຫຼື ຮັບການຊ່ວຍເຫຼືອຈາກຊ່ຽວຊານເພື່ອຊ່ວຍຕິດຕາມອາການຂອງເຈົ້າ.

ເຈົ້າຈະບໍ່ຖືກແຍກຈາກຄອບຄົວຂອງເຈົ້າ ແລະ ຖືກສົ່ງໄປປະເທດອື່ນຍ້ອນມີເຫດການສຸກເສີນ, ຖ້າມັນບໍ່ມີຄວາມຈຳເປັນຕໍ່ເຈົ້າທີ່ຈະຮັບການຊ່ວຍເຫຼືອທາງການແພດເປັນກໍລະນີພິເສດຫຼືເພື່ອຄວາມປອດໄພ. ໃນກໍລະນີນີ້,ເຈົ້າຄວນຕ້ອງມີຜູ້ໃຫ່ຍທີ່ໄວ້ໃຈໄປນຳ ແລະ ຕ້ອງມີແຜນການຢ່າງລະອຽດສຳລັບການກັບຄືນມາຂອງເຈົ້າ.

## ໃຜຈະຊ່ວຍຂ້ອຍຖ້າຄອບຄົວຂອງຂ້ອຍບໍ່ໄດ້ຢູ່ແຫ່ງນັ້ນ?

ຖ້າເຈົ້າຮູ້ວ່າເຈົ້າຢູ່ຄົນດຽວໃນສະພາບເຫດການສຸກເສີນ, ຜູ້ໃຫ່ຍທີ່ຈະມາຊ່ວຍເຈົ້າໃນເຫດການສຸກເສີນຄວນຈະຮູ້ກ່ອນວ່າເຈົ້າແມ່ນໃຜ ແລະ ຈົດລົງທະບຽນຮູບລັກສະນະຂອງເຈົ້າ (ຊື່ຂອງເຈົ້າແມ່ນຫັຍງ, ເຈົ້າມາຈາກໃສ ແລະ ອື່ນໆ.).

ເຊິ່ງມັນຈະຊ່ວຍໃຫ້ພວກເຂົາເຂົ້າໃຈສິ່ງທີ່ເຈົ້າຕ້ອງການ ແລະ ຍັງຊ່ວຍໃຫ້ຮູ້ວ່າບຸກຄົນໃນຄອບຄົວຂອງເຈົ້າແມ່ນໃຜ ແລະ ຢູ່ໃສ ແລະ ອາດສາມາດຊ່ວຍໃຫ້ເຈົ້າກັບຄືນຫາຄອບຄົວ.ເຈົ້າສາມາດຖືກສົ່ງໄປຢູ່ກັບບຸກຄົນທີ່ໄວ້ໃຈໄດ້ ແລະສາມາດດູແລເຈົ້າໃນໄລຍະເວລາໃດໜຶ່ງຈົນກ່ວາພໍ່ແມ່ ຫຼື ບຸກຄົນໃນຄອບຄົວຂອງເຈົ້າໄດ້ຖືກພົບເຫັນ ຫຼື ຈົນກ່ວາມີຄອບຄົວໃໝ່ທີ່ເໝາະສົມກັບຄວາມຕ້ອງການຂອງເຈົ້າ.



**ຂໍຂອບໃຈເປັນພິເສດຕໍ່ເດັກນ້ອຍ ແລະ ຊາວໜຸ່ມກ່ວາ 500 ຄົນ ຜູ້ທີ່ໄດ້ປະກອບສ່ວນຕໍ່ປຶ້ມຫົວນີ້.**

ຕົ້ນສະບັບທີ່ຖືກຕ້ອງຕາມກົດໝາຍຂອງຄູ່ມືວ່າດ້ວຍທາງເລືອກໃນການລ້ຽງດູເດັກແມ່ນມີຢູ່ຫໍສະມຸດ Digital ຂອງອົງການສະຫະປະຊາຊາດ.

© 2019 ຄູ່ມືສໍາລັບ ເດັກນ້ອຍ ແລະ ໄວໜຸ່ມ
ຈັດທໍາໂດຍ ອົງການບ້ານຊ່ວຍເຫຼືອເດັກນ້ອຍ SOS ສາກົນ
Brigittenauer Lände 50–54, 1200 ກຸງວຽນນາ,
ປະເທດອອສຕຣຽດ

www.sos-childrensvillages.org
© 2019 ອອກແບບ ແລະ ຕົກແຕ່ງໂດຍ Visuality.eu

SOS CHILDREN'S VILLAGES